ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****

ເລກທີ 01 /ອອປສ.ປກສ.ສປສ
ນະຄອນຫຼວງວຽງຈັນ, ວັນທີ 02/10/2006

ຄຳແນະນຳຮ່ວມ
ລະຫວ່າງ ໄອຍະການປະຊາຊົນສູງສຸດ, ລັດຖະມົນຕີວ່າການ ກະຊວງປ້ອງກັນຄວາມສະຫງົບ ແລະ ປະທານສານປະຊາຊົນສູງສຸດ ກ່ຽວກັບ ການດຳເນີນຄະດີຕໍ່ເດັກ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ;
- ອີງຕາມ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວ;
- ອີງຕາມ ກົດໝາຍວ່າດ້ວຍສານປະຊາຊົນແຫ່ງ ສປປ ລາວ;
- ອີງຕາມ ກົດໝາຍອາຍາ ແລະ ກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ;
- ອີງຕາມ ມາດຕາ 55 ຂອງລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປລາວ ວ່າ ດ້ວຍ ການສ້າງນິຕິກຳ ສະບັບເລກທີ 02/ສປປ ລົງວັນທີ 20/10/2003;
- ອີງຕາມ ຂໍ້ຕົກລົງຂອງນາຍົກລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 23/01/06 ວ່າດ້ວຍການແຕ່ງຕັ້ງຄະນະປະສານງານວຽກງານສຳລັບເດັກຂັ້ນສູນກາງ;
- ອີງຕາມ ຄວາມຮຽກຮ້ອງຕ້ອງການຂອງວຽກງານ;

ໄອຍະການປະຊາຊົນສູງສຸດ, ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ ແລະ ປະທານ ສານປະຊາຊົນສູງສຸດ ອອກຄຳແນະນຳ

ພາກທີ I
ການດຳເນີນຄະດີ ແລະ ການຟື້ນຟູເດັກກະທຳຜິດ

ມາດຕາ 1: ຈຸດປະສົງ

ຄຳແນະນຳສະບັບນີ້ ກຳນົດຫຼັກການ, ວິທີການ ແລະ ມາດຕະການກ່ຽວກັບການດຳເນີນຄະດີ ເດັກກະທຳຜິດ ໂດຍແຍກອອກຈາກຂັ້ນຕອນຂອງການດຳເນີນຄະດີແບບຜູ້ໃຫຍ່, ຊ່ວຍເຫຼືອ ເດັກຖືກເຄາະຮ້າຍຈາກອາຊະຍາກຳ ແນໃສ່ຮັບປະກັນຄວາມເປັນເອກະພາບໃນການດຳເນີນຄະດີ

ຕໍ່ເດັກ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງເດັກ, ສ້າງເງື່ອນໄຂໃຫ້ເດັກກາຍເປັນ ພົນລະເມືອງດີໃນອະນາຄົດ ເພື່ອປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະ ເທດຊາດ.

ມາດຕາ 2: ເດັກກະທຳຜິດ

ເດັກກະທຳຜິດ ແມ່ນເດັກທີ່ມີອາຍຸແຕ່ 15 ປີ ຂຶ້ນໄປແຕ່ບໍ່ເຖິງ 18 ປີ, ມີສະຕິສຳປະຊັນ ຍະສົມບູນ ແລະ ມີພຶດຕິກຳທີ່ເປັນອັນຕະລາຍຕໍ່ສັງຄົມ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນໆຂອງ ສປປ ລາວ ທີ່ໄດ້ກຳນົດໂທດທາງອາຍາ.

ຈະບໍ່ຖືວ່າເດັກໄດ້ກະທຳຜິດ ຖ້າວ່າມູນຄ່າຄວາມເສຍຫາຍ ທີ່ເດັກກໍ່ຂຶ້ນນັ້ນຫາກບໍ່ເຖິງ 500.000 ກີບ.

ມາດຕາ 3: ວິທີແກ້ໄຂການກະທຳຜິດຂອງເດັກ

- ຖ້າເດັກກະທຳຜິດໃນສະຖານລະຫຸໂທດ, ໂທສານຸໂທດ ທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະ ພາບບໍ່ເຖິງສາມປີ ແລະ ເປັນການກະທຳຜິດຄັ້ງທຳອິດໃຫ້ເດັກຜູ້ກະທຳຜິດນັ້ນຂໍອະໄພໂທດນຳ ຜູ້ຖືກເສຍຫາຍ, ໃຫ້ຜູ້ປົກຄອງໃຊ້ແທນຄ່າເສຍຫາຍ ແລ້ວມອບເດັກໃຫ້ພໍ່ແມ່ ແລະ ອົງການປົກ ຄອງສຶກສາອົບຮົມຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 53 ຂອງກົດໝາຍອາຍາ;
- ໃນກໍລະນີທີ່ການກະທຳຜິດຂ້າງເທິງນັ້ນ ຫາກເປັນການກະທຳຜິດທີ່ບໍ່ເຂັດຫຼາບ ຫຼື ເປັນການ ກະທຳຜິດຊຶ່ງກົດໝາຍໄດ້ກຳນົດໂທດຕັດອິດສະລະພາບແຕ່ ສາມປີ ຂຶ້ນໄປ ໃຫ້ດຳເນີນຄະດີ ຕາມກົດໝາຍ.

ມາດຕາ 4: ຫຼັກການໃນການດຳເນີນຄະດີເດັກ

ໃນການດຳເນີນຄະດີເດັກໃຫ້ປະຕິບັດຕາມຫຼັກການດັ່ງນີ້:

1. ການດຳເນີນຄະດີບໍ່ໃຫ້ດຳເນີນຄືກັນກັບຜູ້ໃຫຍ່;
2. ການດຳເນີນຕ້ອງວ່ອງໄວ ກວ່າການດຳເນີນຄະດີທົ່ວໄປ;
3. ໃນການດຳເນີນຄະດີຕ້ອງນຳໃຊ້ຮູບການ, ວິທີການ ແລະ ທ່າທີ່ທີ່ເໝາະສົມ, ນິ້ມນວນເພື່ອບໍ່ ໃຫ້ເດັກມີຄວາມຢ້ານກົວ;
4. ໃນການດຳເນີນຄະດີຕ້ອງມີພໍ່ແມ່ ຫຼື ຜູ້ປົກຄອງ, ຄູ-ອາຈານ, ຜູ້ປົກປ້ອງ ຫຼື ທະນາຍຄວາມ ເຂົ້າຮ່ວມນຳ;
5. ຫຼີກເວັ້ນການນຳໃຊ້ມາດຕະການສະກັດກັ້ນເຊັ່ນ: ການກັກຕົວ, ການຈັບຕົວ, ການກັກຂັງພາງ, ເວັ້ນເສຍແຕ່ກໍລະນີທີ່ຈຳເປັນ;

ມາດຕາ 5: ສິດໃນການຮ້ອງທຸກ

ເດັກ, ພໍ່ແມ່ ຫຼື ຜູ້ປົກຄອງ, ຜູ້ຕາງໜ້າເດັກ ມີສິດຮ້ອງທຸກຕໍ່ການກະທຳທີ່ບໍ່ຖືກຕ້ອງຕາມ ກົດໝາຍ ຂອງຄະນະໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ, ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກ ງານສອບສວນ, ໄອຍະການປະຊາຊົນ ແລະ ຜູ້ພິພາກສາຂອງຄະນະສານເດັກ. ນອກຈາກສິດ ທີ່ໄດ້ກ່າວໄວ້ຂ້າງເທິງນີ້ແລ້ວ ເດັກ, ພໍ່ແມ່ ຫຼື ຜູ້ປົກຄອງ, ຜູ້ຕາງໜ້າເດັກ ຍັງມີສິດອື່ນໆຕາມທີ່ໄດ້

ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ມາດຕາ 6: ອົງການທີ່ມີສິດ ແລະ ໜ້າທີ່ແກ້ໄຂຄະດີເດັກ

ອົງການທີ່ມີສິດ ແລະ ໜ້າທີ່ແກ້ໄຂຄະດີເດັກ ມີດັ່ງນີ້:

1. ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ;
2. ຫ້ອງການຍຸຕິທຳປະຈຳເມືອງ ຫຼື ເທດສະບານ;
3. ໜ່ວຍງານ ສືບສວນ-ສອບສວນເດັກ ຂອງເຈົ້າໜ້າທີ່ຕຳຫຼວດ
4. ໜ່ວຍງານສອບສວນເດັກ ຂອງອົງການໄອຍະການປະຊາຊົນ;
5. ຄະນະສານເດັກຂອງສານປະຊາຊົນ.

ພະນັກງານຂອງອົງການ ແຕ່ຂໍ້ 3 ຫາ ຂໍ້ 5 ທີ່ກ່າວມາຂ້າງເທິງນີ້ ຕ້ອງໄດ້ຜ່ານການຝຶກອົບຮົມກ່ຽວກັບວຽກງານຍຸຕິທຳສຳລັບເດັກ.

ມາດຕາ 7: ສິດ ແລະ ໜ້າທີ່ຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ

ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານມີສິດ ແລະ ໜ້າທີ່ຕົ້ນຕໍດັ່ງນີ້:

1. ສຶກສາອົບຮົມຄູ່ຄວາມໃນຄະດີ;
2. ໄກ່ເກ່ຍການໃຊ້ແທນຄ່າເສຍຫາຍທາງແພ່ງ;
3. ໄກ່ເກ່ຍການກະທຳຜິດທາງອາຍາທີ່ມີລັກສະນະເບົາບາງ;

ສ່ວນສິດ ແລະ ໜ້າທີ່ ລະອຽດແມ່ນໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງ ຂອງລັດຖະມົນຕີວ່າການກະຊວງຍຸຕິທຳ ວ່າດ້ວຍການສ້າງຕັ້ງ ແລະ ເຄື່ອນໄຫວຂອງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ສະບັບເລກທີ 304/ກຍ, ລົງວັນທີ 07 ສິງຫາ 1997.

ມາດຕາ 8: ສິດ ແລະ ໜ້າທີ່ຂອງຫ້ອງການຍຸຕິທຳປະຈຳເມືອງ ຫຼື ເທດສະບານ

ຫ້ອງການຍຸຕິທຳປະຈຳເມືອງ ຫຼື ເທດສະບານມີສິດ ແລະ ໜ້າທີ່ຕົ້ນຕໍໃນການສຶກສາອົບຮົມ ແລະ ໄກ່ເກ່ຍຄູ່ຄວາມໃນຄະດີ ທີ່ໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ບໍ່ສາມາດແກ້ໄຂໄດ້.

ມາດຕາ 9: ສິດ ແລະ ໜ້າທີ່ ຂອງໜ່ວຍງານສືບສວນ-ສອບສວນເດັກ

ພາຍຫຼັງທີ່ໄດ້ເກັບກຳຂໍ້ມູນຫຼັກຖານກ່ຽວກັບຄະດີ ແລະ ບຸກຄະລິກກະພາບຂອງເດັກກະທຳຜິດແລ້ວ ເຈົ້າໜ້າທີ່ສືບສວນ-ສອບສວນມີສິດ ແລະ ໜ້າທີ່ດັ່ງນີ້:

1. ສຶກສາອົບຮົມ ແລ້ວໃຫ້ເດັກທີ່ກະທຳຜິດນັ້ນຂໍອະໄພໂທດນຳຜູ້ຖືກເສຍຫາຍ ຫຼື ໃຫ້ພໍ່ແມ່ ຫຼື ຜູ້ປົກຄອງເດັກໃຊ້ແທນຄ່າເສຍຫາຍ ແລະ ໃຫ້ເດັກນັ້ນຂຽນໃບປະຕິຍານ ແລ້ວສົ່ງເດັກໃຫ້ ອົງການປົກຄອງບ້ານ ແລະ ຄອບຄົວສືບຕໍ່ສຶກສາອົບຮົມ ພ້ອມທັງຕິດຕາມການເຄື່ອນໄຫວຂອງເດັກ ຖ້າເຫັນວ່າພຶດຕິກຳຂອງເດັກຫາກເປັນການກະທຳຜິດທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ວັກ 1 ຂອງຄຳແນະນຳສະບັບນີ້;

2. ພິຈາລະນາສົ່ງສຳນວນຄະດີໃຫ້ໄອຍະການປະຊາຊົນ ຖ້າເຫັນວ່າພຶດຕິກຳຂອງເດັກຫາກເປັນການກະທຳຜິດທີ່ໄດ້ກຳນົດໄວ້ໃນ ມາດຕາ 3 ວັກ 2 ຂອງຄຳແນະນຳສະບັບນີ້;

ມາດຕາ 10: ສິດ ແລະ ໜ້າທີ່ຂອງໄອຍະການປະຊາຊົນ

ໃນການດຳເນີນຄະດີເດັກ ໄອຍະການປະຊາຊົນມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສຶກສາອົບຮົມເດັກກະທຳຜິດ;
2. ຕິດຕາມກວດກາການດຳເນີນຄະດີເດັກ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ;
3. ຕິດຕາມກວດກາ ແລະ ພິຈາລະນາກ່ຽວກັບການກັກຕົວ, ການຈັບຕົວ, ການກັກຂັງພາງ ແລະ ການປ່ອຍຕົວພາງ;
4. ພິຈາລະນາສັ່ງຟ້ອງເດັກຂຶ້ນຫາຄະນະສານເດັກ.

ມາດຕາ 11: ການສືບສວນ-ສອບສວນເດັກ

ການສືບສວນ - ສອບສວນເດັກ ແມ່ນໃຫ້ອີງໃສ່ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ຂອງຄຳແນະນຳສະບັບນີ້.

ມາດຕາ 12: ຜູ້ເຂົ້າຮ່ວມໃນການສອບສວນເດັກ

ໃນການສອບສວນເດັກ ໃຫ້ມີຜູ້ເຂົ້າຮ່ວມດັ່ງນີ້:

1. ເດັກຜູ້ຖືກຫາ, ພໍ່ແມ່ ຫຼື ຜູ້ປົກຄອງ, ຄູ-ອາຈານ, ຜູ້ປົກປ້ອງ ຫຼື ທະນາຍຄວາມ;
2. ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ ຫຼື ໄອຍະການປະຊາຊົນ;
3. ຜູ້ບັນທຶກ, ໃນກໍລະນີທີ່ຈຳເປັນກໍຈະມີຜູ້ຊ່ຽວຊານ ແລະ ຜູ້ແປພາສາເຂົ້າຮ່ວມນຳ.

ມາດຕາ 13: ສະຖານທີ່ສອບສວນເດັກ

ສະຖານທີ່ສອບສວນເດັກ ຕ້ອງເປັນຫ້ອງສະເພາະ, ມີວັດຖຸອຸປະກອນປະກອບຕາມເງື່ອນໄຂທີ່ເໝາະສົມ ແລະ ບໍ່ມີການລົບກວນ.

ມາດຕາ 14: ຫຼັກການສອບສວນເດັກ

ໃນການສອບສວນຕ້ອງປະຕິບັດຕາມຫຼັກການ ດັ່ງລຸ່ມນີ້:

1. ການສອບສວນເດັກແຕ່ລະຄັ້ງ ຕ້ອງໃຫ້ມີພໍ່ແມ່ ຫຼື ຜູ້ປົກຄອງ, ຄູ-ອາຈານ, ຜູ້ປົກປ້ອງ ຫຼື ທະນາຍຄວາມ ເຂົ້າຮ່ວມນຳ ແຕ່ບໍ່ມີສິດໃຫ້ການແທນເດັກ;
2. ຜູ້ສອບສວນຕ້ອງຫຼີກເວັ້ນການໃຊ້ເລ່ຫຼ່ຽມ ຫຼື ໃຫ້ຄຳໝັ້ນສັນຍາແກ່ເດັກ ເພື່ອໃຫ້ເດັກຫຼົງເຊື່ອ ແລະ ບໍ່ໃຫ້ໃຊ້ຄຳຖາມເກົ່າຊ້ຳໄປ-ຊ້ຳມາ;
3. ຫ້າມໃຊ້ຄຳສັບທີ່ເດັກເຂົ້າໃຈຍາກ ແລະ ບໍ່ສອດຄ່ອງກັບຄວາມຮັບຮູ້ຂອງເດັກ;
4. ການສອບສວນເດັກແຕ່ລະຄັ້ງຕ້ອງຮັກສາຄວາມລັບ ແລະ ບໍ່ໃຫ້ໃຊ້ເວລາເກີນເກົ້າສິບນາທີ ໃນເວລາສອບສວນເດັກບໍ່ໃຫ້ ນຸ່ງເຄື່ອງແບບ, ຖືອາວຸດ, ທຸບຕີ, ທໍລະມານເດັກ, ນາບຂູ່ ແລະ ໃຊ້ຄຳເວົ້າຫຍາບຊ້າ;
5. ພາຍຫຼັງສຳເລັດການສອບສວນແລ້ວ ຕ້ອງອ່ານບົດບັນທຶກຄຳໃຫ້ການໃຫ້ເດັກຟັງໂດຍຊ້ອງໜ້າຜູ້ເຂົ້າຮ່ວມ ຫຼື ໃຫ້ເດັກອ່ານດ້ວຍຕົນເອງ ແລ້ວພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໃສ່ ເພື່ອຢັ້ງຢືນຄຳໃຫ້ການດັ່ງກ່າວ.

ມາດຕາ 15: ວິທີການສອບສວນເດັກ

ວິທີການສອບສວນເດັກ ໃຫ້ປະຕິບັດດັ່ງນີ້:

1 ກະກຽມຂໍ້ມູນກ່ອນການສອບສວນ;

2 ຕ້ອງມີການວາງແຜນ, ປຶກສາຫາລືໃນໜ່ວຍງານສອບສວນເດັກ;

3 ສ້າງຄວາມຄຸ້ນເຄີຍກັບເດັກເພື່ອໃຫ້ເດັກມີຄວາມອຸ່ນອ່ຽນ, ບໍ່ມີຄວາມຢ້ານກົວ ແລະ ມີຄວາມເຊື່ອໝັ້ນ ຕໍ່ຜູ້ສອບສວນ;

4 ຖືເອົາເດັກເປັນໃຈກາງໃນການສອບສວນ ໝາຍຄວາມວ່າ ໃຫ້ຟັງຄຳໃຫ້ການຂອງເດັກເປັນສ່ວນຫຼາຍ ບັນຫາໃດທີ່ບໍ່ຈະແຈ້ງ ຈຶ່ງຖາມເຈາະຈີ້ມຕື່ມ;

5 ຕ້ອງໃຊ້ຄຳເວົ້າທີ່ເດັກເຂົ້າໃຈງ່າຍ ແລະ ຫຼີກເວັ້ນການໃຊ້ຄຳຖາມປິດ ຫຼື ຄຳຖາມທີ່ມີລັກສະນະຊັກຈູງ;

6 ຕ້ອງແຍກເດັກກະທຳຜິດອອກຈາກກັນໃນເວລາສອບສວນ ເວັ້ນເສຍແຕ່ໃນກໍລະນີຈຳເປັນທີ່ຕ້ອງມີການສອບສວນຊ້ອງໜ້າເພື່ອໃຫ້ໄດ້ຂໍ້ມູນທີ່ຊັດເຈນ;

ມາດຕາ 16: ການຮັບປະກັນສິດໃນການຕໍ່ສູ້ຄະດີ

ເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນ, ໄອຍະການປະຊາຊົນ ແລະ ຜູ້ພິພາກສາ ຕ້ອງຮັບປະກັນສິດໃນການຕໍ່ສູ້ຄະດີໃຫ້ແກ່ເດັກຜູ້ຖືກຫາ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງກົດໝາຍ ວ່າດ້ວຍການດຳເນີນຄະດີອາຍາ ເປັນຕົ້ນຮັບຊາບຂໍ້ກ່າວຫາ, ແກ້ຂໍ້ກ່າວຫາ, ສະເໜີຫຼັກຖານ, ສະເໜີເອົາຜູ້ປົກປ້ອງ ຫຼື ທະນາຍຄວາມ, ຂໍອຸທອນ, ຂໍລົບລ້າງຄຳສັ່ງ, ຄຳຊີ້ຂາດ, ຄຳຕັດສິນ ແລະ ຄຳພິພາກສາຂອງສານ, ສະເໜີ ຫຼື ຮ້ອງຂໍບັນຫາຕ່າງໆກ່ຽວກັບການສືບສວນ - ສອບສວນ,

ມາດຕາ 17: ການໄຕ່ສວນຄະດີເດັກ

ການໄຕ່ສວນຄະດີເດັກ ຢູ່ທີ່ປະຊຸມສານ ບໍ່ໃຫ້ມີບັນຍາກາດເຄັ່ງຕຶງ, ຟົດເຝືອດ, ການຊັກຖາມໃຫ້ໃຊ້ຄຳຖາມສັ້ນ, ໃຊ້ຄຳສັບທີ່ເດັກເຂົ້າໃຈງ່າຍ, ຫ້າມໃຊ້ຄຳຖາມທີ່ມີລັກສະນະຊັກຈູງ ແລະ ທ່າທີຂອງຄະນະສານຕ້ອງນີ້ມນວນ.

ໃນການໄຕ່ສວນຄະດີເດັກ ຕ້ອງມີການເຂົ້າຮ່ວມຂອງພໍ່ແມ່ ຫຼື ຜູ້ປົກຄອງ, ຄູ-ອາຈານ, ຜູ້ປົກປ້ອງ ຫຼື ທະນາຍຄວາມ.

ມາດຕາ 18: ການພິຈາລະນາຕັດສິນຄະດີເດັກ

ໃນການພິຈາລະນາຕັດສິນຄະດີເດັກ ແມ່ນໃຫ້ຖືເອົາສິດຜົນປະໂຫຍດຂອງເດັກເປັນພື້ນຖານ, ຊອກຫາສາເຫດທີ່ພາໃຫ້ຫຼຸດຜ່ອນຄວາມຮັບຜິດຊອບທາງອາຍາ, ການວາງໂທດໃສ່ເດັກໃຫ້ພິຈາລະນາວາງໂທດຕ່ຳສຸດ ຫຼື ຕ່ຳກວ່າທີ່ກົດໝາຍກຳນົດໄວ້ກໍໄດ້ ຫຼື ນຳໃຊ້ການພາກໂທດ ເວັ້ນເສຍແຕ່ໃນກໍລະນີທີ່ເປັນການກະທຳຜິດ ທີ່ກົດໝາຍໄດ້ກຳນົດໂທດຕັດອິດສະລະພາບ ແຕ່ສາມປີຂຶ້ນໄປ ຫຼື ເປັນການກະທຳຜິດບໍ່ເຂັດຫຼາບ.

ມາດຕາ 19: ການນຳສົ່ງ ແລະ ການຄວບຄຸມການປະພຶດຂອງເດັກກະທຳຜິດ

ເດັກກະທຳຜິດທີ່ບໍ່ຮ້າຍແຮງ ໃຫ້ເຈົ້າໜ້າທີ່ນຳສົ່ງໄປຍັງ ອົງການປົກຄອງບ້ານ, ອົງການຈັດຕັ້ງມະຫາຊົນ, ໂຮງຮຽນ, ພໍ່ແມ່ ຫຼື ຜູ້ປົກຄອງ, ຈິດຕະແພດ, ນັກສັງຄົມສົງເຄາະ ເພື່ອສຶກສາອົບຮົມ, ກ່າວເຕືອນ ຫຼື ໃຫ້ເດັກກະທຳຜິດຂໍອະໄພໂທດນຳຜູ້ຖືກເສຍຫາຍ ໃນກໍລະນີເປັນການກະທຳຜິດທີ່ຮ້າຍແຮງຕ້ອງນຳສົ່ງເຂົ້າສະຖານທີ່ກັກຂັງສະເພາະ ຫຼີກເວັ້ນການກັກຂັງເດັກຮ່ວມກັບຜູ້ໃຫຍ່.

ໃນການດຳເນີນຄະດີຕໍ່ເດັກກະທຳຜິດ ສານອາດຈະຕັດສິນສົ່ງເດັກໄປສູນຄວບຄຸມການປະພຶດເດັກ ເພື່ອສຶກສາອົບຮົມ, ຕິດຕາມການປະພຶດ ແລະ ຝຶກອົບຮົມວິຊາຊີບ.

ມາດຕາ 20: ການຟື້ນຟູເດັກກະທຳຜິດ

ເດັກກະທຳຜິດ ຕ້ອງໄດ້ຮັບການປິ່ນປົວ ແລະ ຟື້ນຟູທາງດ້ານຮ່າງກາຍ ແລະ ຈິດໃຈ, ຊ່ວຍເຫຼືອທາງດ້ານກົດໝາຍ, ໄດ້ຮັບການສຶກສາ, ຝຶກອົບຮົມວິຊາຊີບ ແລະ ໄດ້ຮັບການຊ່ວຍເຫຼືອດ້ານອື່ນໆ ຈາກສັງຄົມຕາມຄວາມເໝາະສົມ.

ໃນເວລາດຳເນີນຄະດີ ຫລື ພາຍຫຼັງການຕັດສິນຂອງສານແລ້ວ ເດັກກະທຳຜິດທີ່ຕິດເຫຼົ້າ ຫລື ຕິດຢາເສບຕິດ, ເປັນບ້າ, ເສຍຈິດ, ເປັນພະຍາດຕິດແປດ ຕ້ອງສົ່ງໄປປິ່ນປົວຢູ່ໂຮງໝໍ ຫຼື ສະຖານທີ່ປິ່ນປົວສະເພາະ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 114 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

ມາດຕາ 21: ການກັບຄືນສູ່ສັງຄົມ

ເພື່ອສ້າງເງື່ອນໄຂ ໃຫ້ເດັກກະທຳຜິດທີ່ໄດ້ປະຕິບັດໂທດແລ້ວກັບຄືນສູ່ສັງຄົມໄດ້ດີ ເຈົ້າໜ້າທີ່ທີ່ກ່ຽວຂ້ອງຕ້ອງສຶກສາອົບຮົມ ແລະ ແນະນຳສັງຄົມ ແລະ ຊຸມຊົນໃຫ້ຮັບເອົາຜູ້ກ່ຽວເຂົ້າຮ່ວມດຳລົງຊີວິດ, ຊ່ວຍເຫຼືອໃນການຊອກວຽກເຮັດງານທຳ, ຕິດຕາມ, ສຶກສາອົບຮົມ ແລະ ໃຫ້ຄຳແນະນຳ ໃນເວລາຈຳເປັນ.

.....

ພາກທີ II
ການຊ່ວຍເຫຼືອເດັກຖືກເຄາະຮ້າຍ

ມາດຕາ 22: ເດັກຖືກເຄາະຮ້າຍ

ເດັກຖືກເຄາະຮ້າຍ ແມ່ນບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ ລົງມາ ແລະ ໄດ້ຮັບຄວາມເສຍຫາຍຈາກການກະທຳຂອງບຸກຄົນອື່ນເຊັ່ນ: ການຄ້າມະນຸດ, ການຊຸດຮີດແຮງງານ, ການຄ້າໂສເພນີ, ການລ່ວງລະເມີດທາງເພດ, ການທາລຸນ, ການທຳຮ້າຍຮ່າງກາຍ ແລະ ອື່ນໆ.

ມາດຕາ 23: ການສຳພາດເດັກຖືກເຄາະຮ້າຍ

ການສຳພາດເດັກຖືກເຄາະຮ້າຍ ແມ່ນການສອບຖາມເດັກ ດ້ວຍວິທີການອັນເໝາະສົມ ເພື່ອເກັບກຳຂໍ້ມູນທີ່ເປັນພື້ນຖານໃຫ້ແກ່ການຊ່ວຍເຫຼືອເດັກ.

ມາດຕາ 24: ຫຼັກການ ແລະ ວິທີການສຳພາດເດັກຖືກເຄາະຮ້າຍ

ໃນການສຳພາດເດັກຖືກເຄາະຮ້າຍ ໃຫ້ປະຕິບັດຕາມມາດຕາ 14 ແລະ 15 ຂອງຄຳແນະນຳສະບັບນີ້ ເວັ້ນເສຍແຕ່ການເຂົ້າຮ່ວມຂອງພໍ່ແມ່ ຫຼື ຜູ້ປົກຄອງ ໃນກໍລະນີທີ່ບຸກຄົນດັ່ງກ່າວເປັນຜູ້ກະທຳຜິດຕໍ່ເດັກເອງ.

ມາດຕາ 25: ຂັ້ນຕອນການສຳພາດເດັກຖືກເຄາະຮ້າຍ

ໃນການສຳພາດເດັກຖືກເຄາະຮ້າຍໃຫ້ປະຕິບັດຕາມຂັ້ນຕອນດັ່ງນີ້:

- ຂັ້ນຕອນທີໜຶ່ງ: ພະນັກງານຜູ້ສຳພາດໂອ້ລົມກັບເດັກຢ່າງເປັນອິດສະລະ ແລະ ເປັນກັນເອງ, ປ່ອຍໃຫ້ເດັກເວົ້າອອກມາແບບທຳມະຊາດຕາມພາສາຂອງເດັກ, ເມື່ອເດັກພ້ອມທີ່ຈະເປີດເຜີຍຂໍ້ມູນ ຕ້ອງບັນທຶກເອົາຄຳໃຫ້ການຂອງເດັກ;
- ຂັ້ນຕອນທີສອງ: ໃນກໍລະນີທີ່ການສຳພາດຕາມຂັ້ນຕອນທີໜຶ່ງຫາກບໍ່ໄດ້ຮັບຜົນສຳເລັດ ໃຫ້ນຳໃຊ້ວັດຖຸປະຈັກຕາເຂົ້າຊ່ວຍຄວາມຊົງຈຳຂອງເດັກເຊັ່ນ: ແຜນວາດ, ຮູບພາບ, ຮູບແຕ້ມ ແລະ ອື່ນໆເພື່ອໃຫ້ເດັກຈື່ຈຳເຫດການຕ່າງໆທີ່ເກີດຂຶ້ນ ເມື່ອເດັກພ້ອມທີ່ຈະເປີດເຜີຍຂໍ້ມູນ ຕ້ອງບັນທຶກເອົາຄຳໃຫ້ການຂອງເດັກ;
- ຂັ້ນຕອນທີສາມ: ໃນເມື່ອນຳໃຊ້ຂັ້ນຕອນທີໜຶ່ງ ແລະ ຂັ້ນຕອນທີສອງບໍ່ໄດ້ຮັບຜົນສຳເລັດແລ້ວ ພະນັກງານຜູ້ສຳພາດຕ້ອງນຳເອົາຂໍ້ມູນທີ່ເກັບກຳໄດ້ນັ້ນເລົ່າໃຫ້ເດັກຟັງໃນລັກສະນະຊ່ວຍໃຫ້ເດັກຈົດຈຳເຫດການໄດ້ ແຕ່ບໍ່ໃຫ້ມີລັກສະນະຊີ້ນຳ ເມື່ອເຫັນວ່າເດັກພ້ອມໃຫ້ການແລ້ວ ຈຶ່ງເຮັດບົດບັນທຶກການສຳພາດ; ເມື່ອໄດ້ປະຕິບັດສາມຂັ້ນຕອນແລ້ວ ແຕ່ເດັກກໍຍັງບໍ່ໃຫ້ການ ຫຼື ບໍ່ໃຫ້ຂໍ້ມູນຫຍັງເທື່ອ ພະນັກງານ ຜູ້ສຳພາດຕ້ອງຢຸດເຊົາການສຳພາດໄວ້ຊົ່ວຄາວ ແລ້ວຈຶ່ງສືບຕໍ່ໃນຄັ້ງໃໝ່.

ມາດຕາ 26: ບົດບັນທຶກການສຳພາດເດັກຖືກເຄາະຮ້າຍ

ການເຮັດບົດບັນທຶກ ການສຳພາດເດັກຖືກເຄາະຮ້າຍ ໃຫ້ປະຕິບັດຄືກັນກັບການເຮັດບົດບັນທຶກເອົາຄຳໃຫ້ການ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 45 ຂອງກົດໝາຍວ່າດ້ວຍການດຳເນີນ

ຄະດີອາຍາ.

ມາດຕາ 27: ການນຳສົ່ງເດັກຖືກເຄາະຮ້າຍ

ເດັກຖືກເຄາະຮ້າຍ ອາດຈະນຳສົ່ງໄປຫາແພດ ຫຼື ຈິດຕະແພດ, ພໍ່ແມ່ ຫຼື ຜູ້ປົກຄອງ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງບ້ານ, ນັກສັງຄົມສົງເຄາະ ແລະ ເຈົ້າໜ້າທີ່ຕຳຫຼວດ ຕາມຄວາມເໝາະສົມ.

ໃນກໍລະນີທີ່ພໍ່ແມ່ ຫຼື ຜູ້ປົກຄອງ ຫາກເປັນຜູ້ກະທຳຜິດຕໍ່ເດັກນັ້ນ ຫ້າມນຳສົ່ງເດັກຜູ້ຖືກເຄາະຮ້າຍໄປຫາບຸກຄົນດັ່ງກ່າວຄືນ.

ມາດຕາ 28: ການຟື້ນຟູເດັກຖືກເຄາະຮ້າຍ

ການຟື້ນຟູເດັກຖືກເຄາະຮ້າຍໃຫ້ປະຕິບັດດັ່ງດຽວກັນກັບເນື້ອໃນ ທີ່ໄດ້ກຳນົດໄວ້ໃນ ມາດ ຕາ 21 ວັກ 1 ຂອງຄຳແນະນຳສະບັບນີ້.

ມາດຕາ 29: ຜົນສັກສິດ

ຄຳແນະນຳສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ໄອຍະການປະຊາຊົນສູງສຸດ

ສົມພັນ ແພງຄຳມີ

ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

ປະທານສານປະຊາຊົນສູງສຸດ

ຄຳມີ ໄຊຍະວົງ